ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0415 /ກງ

ນະຄອນຫຼວງວຽງຈັນ, ວັນທີ 10 ກຸມພາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການເກັບຄ່າທຳນຽມ

## ສຳລັບສິນຄ້າ,ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 09133/ກພສ, ລົງວັນທີ 19 ພະຈິກ 2019 ກ່ຽວກັບການສະເໜີພິຈາລະນາປັບອັດຕາການເກັບຄ່າທຳນຽມ ບາງປະເພດສິນຄ້າ, ເຄື່ອງຂອງ ສຳລັບການນຳເຂົ້າເພື່ອສົ່ງອອກຕໍ່;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 109/ຫສນຍ, ລົງວັນທີ 28 ມັງກອນ 2020 ວ່າດ້ວຍ ທິດຊີ້ນຳກ່ຽວກັບການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການເກັບຄ່າທຳນຽມສຳລັບສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ຂອງ ກະຊວງການເງິນ.

## ລັດຖະມົນຕີກະຊວງການເງິນ ຕົກລົງ :

**ມາດຕາ 1** ກຳນົດ ອັດຕາຄ່າທຳນຽມໃນການອອກໜັງສືອະນຸມັດສຳລັບການນຳເຂົ້າສິນຄ້າ,ເຄື່ອງຂອງເພື່ອສົ່ງອອກຕໍ່ ໂດຍບັນດາຜູ້ປະກອບການນຳເຂົ້າ-ສົ່ງອອກທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບອະນຸຍາດ ແລະ ເພື່ອຕອບສະໜອງຕໍ່ນະໂຍບາຍຂອງ ສປປລາວ ໃນການຫັນປ່ຽນຈາກປະເທດທີ່ບໍ່ມີທາງອອກສູ່ທະເລມາເປັນປະເທດທີ່ເປັນສູນກາງເຊື່ອມຕໍ່ກັບບັນດາປະເທດໃນພາກພື້ນ ແລະ ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແນໃສ່ເກັບລາຍຮັບເຂົ້າງົບປະມານແຫ່ງລັດ.

**ມາດຕາ 2** ການກຳນົດປະເພດສິນຄ້າ, ເຄື່ອງຂອງ ແລະ ອັດຕາຄ່າທານຽມແບບເດັດຖານ

ກົມພາສີ, ກອງຄຸ້ມຄອງພາສີແລະດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດຈັດເກັບຄ່າທຳນຽມການນຳເຂົ້າເພື່ອສົ່ງອອກຕໍ່ແບບເດັດຖານສຳລັບປະເພດສິນຄ້າ,ເຄື່ອງຂອງທີ່ຢູ່ໃນບັນຊີຄຸ້ມຄອງຂອງລັດຖະບານ ດັ່ງນີ້:

ກ. ປະເພດຢາສູບທຸກຊະນິດ ທຸກຍີ່ຫໍ້:

| ລຳດັບ | ປະເພດຢາສູບ | ອັດຕາຄ່າທຳນຽມ |
|---|---|---|
| 1 | ຢາສູບເປັນຊອງ, 20ກອກX10ຊອງX50ຕຸດ/ແກັດ | 17 USD/ແກັດ |
| 2 | ຢາສູບເປັນຊອງ, 20ກອກX10ຊອງX25ຕຸດ/ແກັດ | 10 USD/ແກັດ |
| 3 | ຢາສູບຊິກາ | 15 USD/ແກັດ |
| 4 | ຢາເສັ້ນ | 0.5 USD/ກລ |

ຂ. ປະເພດເຄື່ອງດື່ມທີ່ມີທາດເຫຼົ້າ:

| ລຳດັບ | ປະເພດເຄື່ອງດື່ມທີ່ມີທາດເຫຼົ້າ | ອັດຕາຄ່າທຳນຽມ |
|---|---|---|
| 1 | ເຫຼົ້າວິສະກີ, ເຫຼົ້າໂກຍັກ, ເຫຼົ້າແວງ, ເຫຼົ້າໂວດກາ, ເຫຼົ້າໝາວໄຖ (MAOTAI), ເຫຼົ້າໂຊຈູ, ເຫຼົ້າສາເກ ແລະ ເຫຼົ້າອື່ນໆ ເກີນ 0.5% ໂດຍປະລິມານ | 1 USD/ລິດ |
| 2 | ເບຍທີ່ມີທາດເຫຼົ້າບໍ່ເກີນ 5.00% ໂດຍປະລິມານ | 0.3 USD/ລິດ |
| 3 | ເບຍທີ່ມີທາດເຫຼົ້າເກີນ 5.00% ແຕ່ບໍ່ເກີນ 10.00% ໂດຍປະລິມານ | 0.5 USD/ລິດ |
| 4 | ເບຍທີ່ມີທາດເຫຼົ້າເກີນ 10.00% ໂດຍປະລິມານ | 0.7 USD/ລິດ |

ຄ. ປະເພດນ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນທຸກຊະນິດ ເຊັ່ນ: ນ້ຳມັນເຄື່ອງ, ນ້ຳມັນໄຮໂດຣລິກ, ນ້ຳມັນເບຣກ, ນ້ຳມັນໝຽວ (ກໍລະນີໄດ້ຮັບອະນຸຍາດ) ໃຫ້ເກັບໃນອັດຕາ 0.25 USD/ລິດ/ກລ.

ງ. ປະເພດພາຫະນະ ທຸກຊະນິດ ທຸກຍີ່ຫໍ້ (ກໍລະນີໄດ້ຮັບອະນຸຍາດ):

| ລຳດັບ | ປະເພດພາຫະນະ | ອັດຕາຄ່າທຳນຽມ |
|---|---|---|
| 1 | ລົດ 04 ລໍ້ ທີ່ມີຄວາມແຮງບໍ່ເກີນ 3000 ຊີຊີ | 800 USD/ຄັນ |
| 2 | ລົດ 04 ລໍ້ ທີ່ມີຄວາມແຮງເກີນ 3000 ຊີຊີ | 1,500 USD/ຄັນ |
| 3 | ລົດຈັກ ເປັນຄັນ (CBU) | 15 USD/ຄັນ |
| 4 | ລົດຈັກ ເປັນສິ້ນສ່ວນຄົບຊຸດສົມບູນ (CKD) | 2 USD/ຄັນ |
| 5 | ພາຫະນະກົນຈັກໜັກ ເຊັ່ນ: ລົດດູດ, ລົດຕັກ, ລົດເກດ, ລົດໄຖ, ໂຟກລິບ ແລະ ພາຫະນະທີ່ຄ້າຍຄຽງ | 300 USD/ຄັນ |

ຈ. ປະເພດສັດມີຊີວິດ:

| ລຳດັບ | ປະເພດສັດມີຊີວິດ | ອັດຕາຄ່າທຳນຽມ |
|---|---|---|
| 1 | ຄວາຍ | 23 USD/ໂຕ |
| 2 | ງົວ | 18 USD/ໂຕ |
| 3 | ໝູ ນ້ຳໜັກບໍ່ເກີນ 5 ກິໂລກຣາມ | 7 USD/ໂຕ |
| 4 | ໝູ ນ້ຳໜັກເກີນ 5 ກິໂລກຣາມ | 10 USD/ໂຕ |
| 5 | ມ້າ | 30 USD/ໂຕ |
| 6 | ແບ້ | 10 USD/ໂຕ |
| 7 | ແກະ | 12 USD/ໂຕ |

**ມາດຕາ 3 ການກຳນົດປະເພດສິນຄ້າ, ເຄື່ອງຂອງ ແລະ ອັດຕາທຳນຽມແບບທຽບຖານ**

ປະເພດສິນຄ້າ, ເຄື່ອງຂອງທີ່ບໍ່ມອບໃນມາດຕາ 02 ຂ້າງເທິງ ແມ່ນໃຫ້ປະຕິບັດການເກັບຄ່າທຳນຽມ ແບບທຽບຖານ ດັ່ງນີ້:

- ປະເພດສິນຄ້າ,ເຄື່ອງຂອງທີ່ມີອັດຕາພາສີປົກກະຕິ ແຕ່ 5% ຫາ 10% ໃຫ້ເກັບໃນອັດຕາ 2%;
- ປະເພດສິນຄ້າ,ເຄື່ອງຂອງທີ່ມີອັດຕາພາສີປົກກະຕິ ແຕ່ 11% ຫາ 20% ໃຫ້ເກັບໃນອັດຕາ 4%;
- ປະເພດສິນຄ້າ, ເຄື່ອງຂອງທີ່ມີອັດຕາພາສີປົກກະຕິ ແຕ່ 21% ຫາ 40% ໃຫ້ເກັບໃນອັດຕາ 6% ຂອງມູນຄ່າແຈ້ງພາສີຮອດຊາຍແດນບ່ອນນຳເຂົ້າສິນຄ້າ,ເຄື່ອງຂອງ (ລາຄາ CIF),

**ມາດຕາ 4** ມອບໃຫ້ ກົມພາສີ ເປັນຜູ້ຄົ້ນຄວ້າ ແລະ ກຳນົດຖານມູນຄ່າແຈ້ງພາສີສຳລັບສິນຄ້າ, ເຄື່ອງຂອງ ນຳເຂົ້າເພື່ອສົ່ງອອກຕໍ່ ໃນມາດຕາ 3 ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ພາກພື້ນ ໃນແຕ່ລະໄລຍະ.

ໃນກໍລະນີທີ່ມີການສະເໜີຂໍນຳເຂົ້າເພື່ອສົ່ງອອກຕໍ່ປະເພດສັດມີຊີວິດທີ່ບໍ່ໄດ້ກຳນົດໃນ ມາດຕາ 2 ຂໍ້ (ຈ) ຂ້າງເທິງແມ່ນມອບໃຫ້ກົມພາສີ ຄົ້ນຄວ້າ ແລະ ນຳສະເໜີກະຊວງການເງິນພິຈາລະນາ ເປັນແຕ່ລະກໍລະນີ.

**ມາດຕາ 5** ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າເພື່ອສົ່ງອອກຕໍ່ ຈະບໍ່ຖືກເກັບອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້ ແຕ່ຕ້ອງໄດ້ເສຍອາກອນກຳໄລ ຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ແລະ ກົດໝາຍວ່າດ້ວຍອາກອນລາຍໄດ້. ການນຳເຂົ້າແຕ່ລະຄັ້ງຕ້ອງໄດ້ເຮັດສັນຍາກັບກົມພາສີ ຫຼື ກອງຄຸ້ມຄອງພາສີ ທີ່ໄດ້ຮັບອະນຸຍາດບົນພື້ນຖານອັດຕາເກັບທີ່ເປັນເອກະພາບໃນຂອບເຂດທົ່ວປະເທດ. ສຳລັບສິນຄ້າທີ່ກຳນົດໄວ້ໃນມາດຕາ 2 ຂໍ້ (ກ), ຂໍ້ (ຂ), ຂໍ້ (ຄ) ແລະ ຂໍ້ (ງ) ຕ້ອງໄດ້ມີການຄ້ຳປະກັນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 6** ຫ້າມເດັດຂາດບໍ່ໃຫ້ນຳເອົາສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ມາຂາຍຢູ່ພາຍໃນປະເທດ. ໃນກໍລະນີມີການ ຫຼົບຫຼີກ, ເຊື່ອງອຳ ຫຼື ບໍ່ປະຕິບັດຕາມຂໍ້ຜູກພັນສັນຍາ ຈະໄດ້ມີການດຳເນີນຄະດີຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກຳນົດຢ່າງເຂັ້ມງວດ ຫຼື ອາດຈະຖືກຍົກເລີກຂໍ້ຜູກພັນສັນຍາທັນທີ ແລະ/ຫຼື ຮິບເງິນມັດຈຳມອບເຂົ້າງົບປະມານແຫ່ງລັດຕາມກົດໝາຍ ແລະ ລະບຽບການກຳນົດ.

**ມາດຕາ 7** ຄ່າທຳນຽມສຳລັບບາງປະເພດສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ແມ່ນໃຫ້ເກັບຢູ່ດ່ານພາສີບ່ອນນຳເຂົ້າສິນຄ້າ, ເຄື່ອງຂອງ, ໂດຍອີງຕາມສັນຍາທີ່ໄດ້ເຊັນກັບກົມພາສີ ຫຼື ກອງຄຸ້ມຄອງພາສີ ຫຼື ດ່ານພາສີຊາຍແດນ. ການຄິດໄລ່ແມ່ນເປັນເງິນສະກຸນເງິນໂດລາສະຫະລັດ (USD) ແຕ່ມອບເຂົ້າເປັນລາຍຮັບງົບປະມານແຫ່ງລັດເປັນສະກຸນເງິນກີບ ໂດຍອີງຕາມອັດຕາແລກປ່ຽນລາຄາຂາຍເງິນໂດລາສະຫະລັດໃນແຕ່ລະໄລຍະ.

**ມາດຕາ 8** ສິນຄ້າ,ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ຈະຕ້ອງຖືກເກັບມ້ຽນໃນສາງສິນຄ້າສະເພາະເພື່ອລໍຖ້າສົ່ງອອກຕໍ່ໄປຕ່າງປະເທດເທົ່ານັ້ນ. ຫ້າມບໍ່ໃຫ້ນຳສິນຄ້າດັ່ງກ່າວເຂົ້າ ຮ້ານຄ້າປອດພາສີ ຫຼື ສາງອື່ນໆຢ່າງເດັດຂາດ.

**ມາດຕາ 9** ມອບໃຫ້ ກົມພາສີ ຈັດຕັ້ງການເຜີຍແຜ່, ແນະນຳ ແລະ ຊີ້ນຳບັນດາພະແນກອ້ອມຂ້າງ, ກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນ ພ້ອມກັນຈັດຕັ້ງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 10** ຂໍ້ຕົກລົງສະບັບນີ້ມີຜົນສັກສິດແລະນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງ 15 ວັນ ນັບແຕ່ວັນທີ່ພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ ແລະ ປ່ຽນແທນ **ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍ ການເກັບຄ່າທຳນຽມເດັດຖານສຳລັບບາງສິນຄ້າ,ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ສະບັບເລກທີ 0462/ກງ, ລົງວັນທີ 11 ມີນາ 2003.**

ລັດຖະມົນຕີ ກະຊວງການເງິນ

ກະຊວງການເງິນ

ສົມດີ ດວງດີ